# ຂະບວນການລາວເພື່ອສິດທິມະນຸດ (ຂລສມ)

**Mouvement Lao pour les Droits de l'Homme (MLDH)**

**Lao Movement for Human Rights (LMHR)**

**BP 123 – 77206 Torcy Cedex, France – Téléphone/Fax: 33 (0) 1 60 06 57 06**

**e-mail : mldh@mldh-lao.org - website: mldh-lao.org**


---------------------------------------------------

ຖແລງການ ໑໐ ທັນວາ ໒໐໐໗

## ສປປລາວ : ວັນ ປະກາດສາກົນ ວ່າ ດ້ວຍ ສິດທິມະນຸດ

ວັນສິດທິມະນຸດ ຂອງປີ ໒໐໐໗ ນີ້ ເປັນ ວັນເລີ້ມຕົ້ນ ຂອງການສລອງ ພາຍໃນ ນຶ່ງປີເຕັມ ໃນວາຣະວັນຄົບຮອບ ໖໐ ປີ ຂອງ ປະກາດສາກົນ ວ່າ ດ້ວຍ ສິດທິມະນຸດ,ໂດຍອົງການ ສະຫະປະຊາຊາດ.

ໃນໂອກາດນີ້, ເລຂາທິການເອກ ອົງການສະຫະປາຊາຊາດ, ທ່ານ ບັນ ກີມູນ, ໄດ້ ກ່າວ ວ່າ:
'' *ພວກເຮົາ ມີໜ້າທີ່ ຮັກສາ ດູແລ່ ເພື່ອໃຫ້ ສິດທິດັ່ງກ່າວນີ້ ເກີດ ເປັນ ຄວາມຈິງ : ໃຫ້ຖືກ ຮັບຮູ້, ເຂົ້າໃຈ ແລະ ນຳໄປປະຕິບັດໂດຍທຸກໆຄົນແລະຢູ່ທຸກແຫ່ງຫົນ ໂດຍສະເພາະ ກໍແມ່ນ ຜູ້ທີ່ ມີ ຄວາມ ຕ້ອງການ ໃຫ ສິດພື້ນຖານ ຂອງ ຕົນ ໄດ້ຮັບການປ້ອງກັນ ພ້ອມທັງການ ຊີ້ນຳ ໃຫ້ ມີ ຄວາມ ເຂົ້າ ໃຈ ກັນດີ ວ່າ ປະກາດສາກົນ ວ່າ ດ້ວຍ ສິດທິມະນຸດ ດັ່ງກ່າວ ມີຈິງ ເພື່ອປ້ອງກັນ ສິດທິ ແລະ ຜົນປະໂຍດ ຂອງ ທຸກຄົນ ໂດຍ ບໍ່ມີ ການຫຍົກເວັ້ນ ໄດ ໄດ ທັງ ຊີ້ນ*''.

ສ່ວນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປລ), ປະຊາຊົນ ທຸກໆເຜົ່າພັນ ຈະ ເຫັນ ຜູ້ນຳ ສປປລ ສລອງ ວັນ ປະກາດສາກົນ ວ່າ ດ້ວຍ ສິດທິມະນຸດ ແບບ ''ຫຼອກລວງ'' ອີກຄັ້ງນຶ່ງ ເພື່ອ ເລືອມຕາ ກຸ່ມ ອົງການ ນານາຊາດ ແລະ ປະເທດ ທີ່ໃຫ້ ການຊ່ວຍເຫຼືອລາວ ໃນຂະນະ ທີ່ ສິດທິມະນຸດ ຢູ່ ໃນ ສປປລ ຍັງ ຖືກຢຽບຍ່ຳ ຢ່າງ ຮ້າຍແຮງ ຕລອດມາ.

ນັບແຕ່ ເມືອງລາວ ໃດ້ ຕົກຢູ່ ໃນການ ຄອບຄອງ ຈາກ ລະບອບ ຜະເດັດການ ພັກ ດຽວ ມາແຕ່ ໑໙໗໕ ຊົນເຜົ່ານ້ອຍ ແລະ ຜູ້ ທີ່ ບໍ່ ຖື ສາສນາພູທ ຖືກ ປາບປາມ ເປັນປະຈຳຢ່າງບໍ່ຢຸດຢັ້ງ, ກົງກັນຂ່າມ ກັບ ຄຳປະຕິເສດ ຈາກ ທາງການລາວ.
ໄນ ລະຍະ ໓໒ ປີ ມານີ້ ລາວມົ້ງ ປະມານ ໓໐ ໐໐໐ ຄົນ ຖືກຂັບໄລ່, ຖືກປະຫານໄປເທື່ອລະນ້ອຍ ຈາກ ທະຫານຂອງລັດຖະບານ ຈົນວ່າ ໃນ ປະຈຸບັນ ນີ້ ເກືອບ ຫາຍສາບສູນໄປ ຫມົດ ແລ້ວ.

ອິສະຣະພາບ ໃນການ ເຊື່ອຖືທາງສາສນາ ຖືກຈຳກັດ ຮັດແຄບ ຢູ່ເລື້ອຍມາ ໂດຍສະເພາະ ສຳລັບ ຜູ້ ທີ່ ບໍ່ ຖື ສາສນາພູທ.

ສິດທິ ໃນການ ປາກເວົ້າ ຂ່າວສານ ຂໍ້ມູນ ປະທ້ວງ ບໍ່ມີ ໃນ ສປປລ. ສື່ສານ ວິທະຍຸ ທໍລະທັດ ອິນເທີແນດ ຖືກ ພັກ-ລັດ ຄວາບຄູມ ຢ່າງ ເຄັ່ງຄັດ.
ສ່ວນ ຄະນະ ຜູ້ນຳ ຂະບວນການ ລຸກຮື້ ໒໖ ຕຸລາ ໑໙໙໙ ກໍ່ຍັງ ບໍ່ທັນ ຖືກ ປ່ອຍຕົວ ເຖີງແມ່ນວ່າ ຈະມີ ຄຳຖແລງການ ຂອງ ປະທານ ສະພາແຫ່ງຊາດລາວໃນເດືອນ ມີນາ ໒໐໐໗ ຜ່ານມາກໍຕາມ.

ສິດທິ ໃນການປິ່ນປົວ ສິດທິ ໃນການສືກສາ ສິດທິການຍຸຕິທັມ ບໍ່ມີ ເພື່ອ ຫມົດທຸກຄົນ.
ຄຳເວົ້າ ທີ່ເກີດຂຶ້ນ ໃນ ສປປລ ຫລັງ ຈາກ ປີ ໑໙໗໕ ມາ ວ່າ '' *ຄົນຮັ່ງ ບໍ່ ໃດ້ ເຂົ້າຄຸກ ຄົນທຸກ ບໍ່ໃດ້ ເຂົ້າໄຮ່ງຫມໍ'* ຍັງ ເປັນຄວາມຈິງ ຢູ່ ສເມີ ຢ່າງ ເຈັບແສບ.

ອິສຣະພາບ ການເມືອງ ບໍ່ມີ ໃນ ສປປລ. ລັດຖະທຳມະນູນ ສປປລາວ ໄດ້ ລະບຸໄວ້ຢ່າງ ຈະແຈ້ງ ວ່າ ມີແຕ່ ພັກປະຊາຊົນປະຕິວັດລາວ ( ປປລ) ເທົ່ານັ້ນ ເປັນ ແກ່ນນຳ.
ສະມາຊິກ ໑໐໐% ຂອງ ສະພາ ຜູ້ແທນ ກໍ່ ລ້ວນ ແລ້ວ ແຕ່ ແມ່ນ ສະມາຊິກ ພັກ ປປລາວ.
ທັງ ສາມ ອຳນາດ (ອຳນາດ ບໍລິຫານ, ອຳນາດ ນິຕິບັນຍັດ ແລະ ອຳນາດ ຕຸລາການ) ຢູ່ໃນ ຄວາມຄວາບຄູມ ຂອງ ອຳນາດ ພັກ ປປລາວ.

ຂະບວນການລາວເພື່ອສິດທິມະນຸດ (ຂລສມ) ຂໍສັນລະເສີນ ກຸ່ມປະເທດອາຊຽນ (ASEAN ) ທີ່ໄດ້ ຈັດຕັ້ງ ຄະນະກຳມະການ ເພື່ອສິດທິມະນຸດ ຂື້ນພາຍໃນ ກຸ່ມປະເທດ ອາຊຽນເອງໃນເດືອນ ກໍຣະກະດາ ໒໐໐໗ ຜ່ານມາ, ເຖີງວ່າຈະມີ ການຄັດຄ້ານ ຈາກ ປະເທດ ທີ່ມີ ການປົກຄອງ ແບບ ການເມືອງ ຈາກ ພັກດຽວ ເຊັ່ນ ພະມ້າ, ລາວ ແລະ ວຽດນາມ ກໍຕາມ. ພ້ອມນີ້ ຂລສມ ຂໍ ຮຽກຮ້ອງຫາ ກຸ່ມປະເທດອາຊຽນ ຈົ່ງໄດ້ ນຳເອົາ ປະກາດສາກົນ ວ່າ ດ້ວຍ ສິດທິມະນຸດ ທີ່ກ່າວນີ້ ມາ ປະຕິບັດຢ່າງແທ້ຈິງ.

ຂລສມ ສະແດງ ຄວາມເສັຽໃຈ ທີ່ ນາຍຍົກລັດຖະມົນຕີ ສປປລາວ, ທ່ານ ບົວສອນ ບຸບຜາວັນ, ໄດ້ກ່າວ ໃນວັນທີ ໑໘ ພຶສຈິກາ ໒໐໐໗ ວ່າ '*'ການມີລະບອບແບບຫຼາຍພັກການເມືອງ ບໍ່ແມ່ນ ເສັ້ນທາງ ທີ່ດີ ສຳລັບ ເມືອງລາວ*''. ເມື່ອຖືກຖາມວ່າ ຖ້າມີ ເຫດການ ຄ້າຍກັບປະເທດພະມ້າ, ລັດຖະບານລາວ ຈະໃຊ້ ອາວຸດ ຍິງໃສ່ ປະຊາຊົນທີ່ປະທ້ວງ ເພື່ອປະຊາທິປະໄຕ ແບບສັນຕິວິທີ ເໝືອນ ກັນບໍ່? ນາຍຍົກລັດຖະມົນຕີ ສປປລາວໄດ້ ຕອບວ່າ '' *ວິທີ ທີ່ດີ ທີ່ສຸດ ສຳລັບ ພວກເຮົາ ກໍຄື ກະທຳທຸກຢ່າງ ເພື່ອ ບໍ່ໃຫ້ ເຫດການ ແບບນັ້ນ ເກີດຂຶ້ນ ໃດ້'*.

ໃນວັນ ປະກາດສາກົນ ວ່າ ດ້ວຍ ສິດທິມະນຸດ ນີ້, ຂລສມ ຂໍຮຽກຮ້ອງ ຢ່າງ ແຮ່ງກ້າ ຕໍ່ນາໆຊາດ ໂດຍສະເພາະ ສະຫະພັນເອີຣົບ, ອົງການ ສະຫະປະຊາຊາດ, ກຸ່ມປະເທດ ເອຊຽນ, ປະເທດມະຫາອຳນາດທັງ ໗ ຈົ່ງໄດ້ວາ່ງ ມາຕະການ ອັນຫນັກແຫ້ນນ ເພື່ອໃຫ້ມີ ການນັບຖື ສິດທິມະນຸດ ປະຊາທິປະໄຕ ແລະ ຄວາມ ຖືກຕ້ອງ ປອງດອງຊາດ ໃນ ລາວ.